# 1-877-328-9677




## ໃຊ້ບັດ EBT ຂອງທ່ານຊື້ອາຫານໄດ້ຢ່າງໃດ?

ກ່ອນທີ່ທ່ານຈະຊື້ຂອງ, ກວດເບິ່ງເງິນສ່ວນເຫລືອຂອງທ່ານເສັຽກ່ອນດ້ວຍການເບິ່ງຢູ່ໃນໃບຮັບໃບສຸດທ້າຍ ຫລື ໂທຣະສັບ ຫາພແນກບໍຣິການລູກຄ້າໂດຍບໍ່ເສັຽຄ່າທີ່ 1-877-328-9677. ເງິນສ່ວນເຫລືອນີ້ຈະເປັນຈຳນວນເງິນສ່ວນຫລາຍທີ່ທ່ານສາມາດຈ່າຍດ້ວຍບັດຂອງທ່ານ.

**ຂັ້ນ 1** ເອົາຂອງທີ່ທ່ານຊື້ໄປຫາບ່ອນນກວດຂອງອອກ. ທ່ານອາດຈະຕ້ອງໄດ້ແຍກອາຫານທີ່ທ່ານມີສິດແລະບໍ່ມີສິດຊື້ອອກຈາກກັນ, ນີ້ກໍຂຶ້ນກັບບາງຫ້າງ.

**ຂັ້ນ 2** ຮູດບັດຂອງທ່ານຜ່ານເຄື່ອງຮັບບັດຂອງລາຍການຂາຍ (POS) ຫລື ຍື່ນບັດ EBT ຂອງທ່ານໃຫ້ພນັກງານຂາຍຂອງ.

**ຂັ້ນ 3** ຕີເລກສ່ວນຕົວ (PIN) ສີ່ໂຕຂອງທ່ານເຂົ້າໄປ. ເຄື່ອງຮັບບັດຈະສະແດງ **** ໃຫ້ເຫັນແທນທີ່ຈະເປັນໂຕເລກທີ່ທ່ານຕີເຂົ້າໄປ.

**ຂັ້ນ 4** ກົດເຄື່ອງຫມາຍ Enter.

**ຂັ້ນ 5** ພນັກງານຂາຍຂອງຕີຈຳນວນທີ່ທ່ານຊື້ເຂົ້າໄປ. ຖ້າຈຳນວນນັ້ນຖືກ, ທ່ານກໍກົດ ເຄື່ອງຫມາຍ "OK" ຫລື "YES".

**ຂັ້ນ 6** ທ່ານຈະໄດ້ຮັບສຳເນົາໃບຮັບຊຶ່ງຈະບົ່ງບອກ:

- ຊື່ ແລະ ທີ່ຢູ່ຂອງຫ້າງ
- ຈຳນວນເງິນທີ່ທ່ານຊື້
- ສ່ວນເຫລືອຂອງເງິນຟູດສແຕັມຂອງທ່ານ

**ຂັ້ນ 7** ເກັບມ້ຽນໃບຮັບຂອງທ່ານເພື່ອທ່ານຈະຮູ້ສ່ວນເງິນເຫລືອອັນໃຫມ່ຂອງທ່ານ ເມື່ອທ່ານໄປຊື້ຂອງເທື່ອຫນ້າ.

ທ່ານຈະບໍ່ຖືກໃຫ້ຈ່າຍຄ່າທັມນຽມທີ່ທ່ານໃຊ້ເງິນຊ່ວຍເຫລືອແບບຟູດສແຕັມຂອງທ່ານ.

## ຈະກວດເບິ່ງເງິນສ່ວນເຫລືອໃນບັດ EBT ຂອງທ່ານໄດ້ຢ່າງໃດ?

ເງິນສ່ວນເຫລືອອັນໃຫມ່ຂອງທ່ານຈະຖືກພິມໄວ້ຢູ່ເທິງໃບຮັບໃບສຸດທ້າຍຂອງທ່ານ. **ຈົ່ງເກັບມ້ຽນໃບຮັບຂອງທ່ານສເມີ.** ຖ້າຫາກທ່ານເຮັດໃບຮັບໃບສຸດທ້າຍເສັຍ, ທ່ານສາມາດໂທຣະສັບຫາຜແນກບໍຣິການລູກຄ້າ ຫລື ຖາມຫ້າງຄ້າເບິ່ງວ່າທ່ານສາມາດກວດເບິ່ງເງິນສ່ວນເຫລືອຂອງທ່ານຢູ່ບ່ອນລາຍການຂາຍ (POS) ໄດ້ຫລືບໍ່.

ຖ້າຫາກບັດຂອງທ່ານເສັຍ ຫລື ຖືກລັກ, ຈົ່ງໂທຣະສັບຫາຜແນກບໍຣິການລູກຄ້າໃນທັນທີຕາມໂທຣະສັບທີ່ບໍ່ຕ້ອງເສັຍຄ່າ ທີ່ 1-877-328-9677. ພວກເຂົາຈະບອກທ່ານວ່າຈະຂໍເອົາບັດໃຫມ່ໄດ້ຢ່າງໃດ. ຖ້າຫາກທ່ານບໍ່ໄດ້ແຈ້ງວ່າບັດຂອງທ່ານເສັຍ ຫລື ຖືກລັກ, ຄົນອື່ນສາມາດໃຊ້ບັດຂອງທ່ານຈ່າຍເງິນຊ່ວຍເຫລືອຂອງທ່ານຫມົດ ແລະ ເງິນນີ້ຈະບໍ່ຖືກໃຊ້ຄືນ.

## ໂທຣະສັບຫາຜແນກບໍຣິການລູກຄ້າໄດ້ໂດຍບໍ່ເສັຍຄ່າ ຖ້າຫາກວ່າ:

- ບັດຂອງທ່ານເສັຍ ຫລື ຖືກລັກ.
- ບັດຂອງທ່ານໃຊ້ບໍ່ໄດ້.
- ທ່ານຢາກປ່ຽນເລກສ່ວນຕົວ (PIN)ຂອງທ່ານຍ້ອນວ່າທ່ານລືມ ຫລື ຖ້າຫາກວ່າຄົນອື່ນຮູ້ ເລກສ່ວນຕົວ (PIN)ຂອງທ່ານ. ຫ້ອງການຊ່ວຍເຫລືອຊຸມຊົນອາດຈະສາມາດຊ່ວຍທ່ານປ່ຽນເລກພິນຂອງທ່ານໄດ້.
- ທ່ານຢາກຮູ້ວ່າທ່ານຍັງມີເງິນເຫລືອເທົ່າໃດຢູ່ໃນແອັກຄ້າວຂອງທ່ານ.
- ທ່ານໄດ້ຈ່າຍຄ່າຊື້ຂອງ ແຕ່ ບໍ່ໄດ້ຮັບຂອງນັ້ນ ຫລື ຖ້າທ່ານໄດ້ຈ່າຍຫລາຍເກີນກວ່າທີ່ທ່ານຊື້.
- ທ່ານມີຄໍາຖາມ ຫລື ບັນຫາອື່ນໆ.

**24 ຊົ່ວໂມງຕໍ່ມື້ / 7 ມື້ຕໍ່ອາທິດ**

**1-877-328-9677**

**TTY: 1-800-735-2929**

ເບິ່ງຕາມແຜນຢູ່ໃນປຶ້ມຝຶກຫັດ EBT ຂອງທ່ານ ແລະ ຕີວັນທີ່ເງິນຊ່ວຍເຫລືອຂອງທ່ານຈະເຂົ້າແອັກຄ້າວຂອງທ່ານເຂົ້າໄປ:

______________________________

(ຈາກວັນທີ 1 ຫາວັນທີ 10 ຂອງເດືອນ)

USDA is an equal opportunity provider and employer.

State of California
*Arnold Schwarzenegger, Governor*
Health and Human Services Agency
*Kimberly Belshé, Secretary*
Department of Social Services

USDA is an equal opportunity provider and employer.